ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ພິທີປະກາດການຈັດຕັ້ງການນຳຂັ້ນສູງຂອງ ທະນາຄານແຫ່ງ ສປປ ລາວ




ໃນຕອນເຊົ້າວັນທີ 23 ມິຖຸນາ 2022 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີປະກາດການຈັກຕັ້ງພິທີມອບ-ຮັບເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ລະຫວ່າງ ສະຫາຍ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ ທຫລ, ຜູ້ວ່າການ ທຫລ (ຜູ້ເກົ່າ) ກັບ ສະຫາຍ ປອ ບຸນເຫຼືອ ສິນໄຊວໍຣະວົງ ເລຂາຄະນະພັກ, ຜູ້ວ່າການ ທຫລ (ຄົນໃໝ່) ໂດຍການໃຫ້ກຽດເຂົ້າຮ່ວມໂອ້ລົມຂອງ ສະຫາຍ ພັນຄຳ ວິພາວັນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ. ພ້ອມນີ້, ກໍມີບັນດາສະຫາຍ ຄະນະພັກ-ຄະນະຜູ້ວ່າການ ທຫລ ສະມາຊິກສະພາບໍລິຫານ ທຫລ, ບັນດາຄະນະກົມ/ທຽບເທົ່າກົມ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີຄັ້ງນີ້, ສະຫາຍ ສອນໄຊ ສິດພະໄຊ ໄດ້ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຂອງ ທຫລ ຕັ້ງແຕ່ເດືອນກັນຍາ ປີ 2018 ເປັນຕົ້ນມາ ການຊີ້ນຳ-ນຳພາຂອງຄະນະພັກ ທຫລ ພາຍໃຕ້ການຊີ້ນຳຂອງພັກ-ລັດຖະບານ, ວຽກງານຂະແໜງທະນາຄານໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີຜົນສຳເລັດຫລາຍດ້ານ. ພ້ອມນີ້, ກໍມີບາງດ້ານທີ່ຕ້ອງເອົາໃຈໃສ່ ສືບຕໍ່ແກ້ໄຂໂດຍສະເພາະ ບັນຫາອັດຕາແລກປ່ຽນທີ່ເປັນບັນຫາເຄັ່ງຮ້ອນ.




ໃນໂອກາດນີ້, ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ໂອ້ລົມຕໍ່ພິທີດັ່ງກ່າວວ່າ: ກົມການເມືອງ-ຄະນະເລຂາທິການສູນກາງພັກ ແລະ ລັດຖະບານ ໄດ້ຕີລາຄາສູງໃນຕະ ຫຼອດໄລຍະຊຸມປີທີ່ຜ່ານມາ ພາຍໃຕ້ການນຳພາຂອງ **ສະຫາຍ ສອນໄຊ ສີດພະໄຊ** ກຳມະການສູນກາງພັກໃນຖານະທີ່ເປັນເລຂາຄະນະພັກ-ຜູ້ວ່າການ ທຫລ ພ້ອມດ້ວຍບັນດາສະຫາຍຄະນະປະຈຳພັກ-ຄະນະພັກ ທຫລ ກໍ່ຄືບັນດາສະຫາຍການນຳຂັ້ນຕ່າງໆຂອງຂະແໜງທະນາຄານ ໄດ້ເປັນເອກະພາບກັນສູງ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິຄຳສັ່ງຂອງຂັ້ນເທິງ ໂດຍສະເພາະແມ່ນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງ ທີ XI ຂອງພັກ ກໍ່ຄືມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ທຫລ ຊຶ່ງໄດ້ມີຜົນສຳເລັດໃນຫຼາຍດ້ານ, ເຖິງຢ່າງໃດກໍຕາມ, ໃນຕໍ່ໜ້າໃຫ້ຂະແໜງການທະນາຄານ ເອົາໃຈໃສ່ພັດທະນານະໂຍບາຍສິນເຊື່ອ ເພື່ອຊຸກຍູ້ການຜະລິດ-ບໍລິການ ທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ, ປັບປຸງໂຄງສ້າງ ແລະ ການບໍລິຫານໃນລະບົບສະຖາບັນການເງິນໃຫ້ມີຄວາມເຂັ້ມແຂງ-ໝັ້ນຄົງ ສາມາດໃຫ້ບໍລິການວຽກງານທະນາຄານໄດ້ຢ່າງມີປະສິດທິພາບ ແລະ ສົ່ງເສີມການເຂົ້າເຖິງແຫຼ່ງທຶນ ເພື່ອຊຸກຍູ້ການຜະລິດພາຍໃນ, ຫຼຸດຜ່ອນລະດັບການຂາດດຸນຊຳລະກັບຕ່າງປະເທດລົງເທື່ອລະກ້າວ, ສະສົມເງິນຕາຕ່າງປະເທດໃຫ້ໄດ້ຢ່າງຕໍ່ເນື່ອງ ແລະ ຍືນຍົງ, ປັບປຸງກົນໄກການຄຸ້ມຄອງອັດຕາແລກປ່ຽນໃຫ້ແທດເໝາະກັບສະພາບຕົວຈິງຫຼາຍຂຶ້ນ ແລະ ຍົກສູງປະສິດທິພາບຂອງການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອແນໃສ່ຍົກສູງບົດບາດກໍຄືການສ້າງສະຖຽລະພາບໃຫ້ຄ່າເງິນກີບ. ຕໍ່ການປັບປຸງການນຳຂັ້ນສູງຂອງຂະແໜງທະນາຄານໃນເທື່ອນີ້, ດ້ານຫຼັກການກໍ່ແມ່ນປະຕິບັດຕາມຂໍ້ກຳນົດຂອງກົມການເມືອງສູນກາງພັກ ວ່າດ້ວຍວຽກງານຄຸ້ມຄອງພະນັກງານ, ອີກດ້ານໜຶ່ງກໍ່ແມ່ນອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່; ພ້ອມກັບການປັບປຸງຜູ້ວ່າການ ທຫລ ນີ້. ສູນກາງພັກກໍ່ໄດ້ດຳເນີນການສັບຊ້ອນ-ຈັດວາງລະດັບກຳມະການສູນກາງພັກ-ພະນັກງານການນຳຈຳນວນໜຶ່ງ ເພື່ອປັບປຸງໜ້າທີ່ວຽກງານກ່ຽວຂ້ອງໃຫ້ມີການຫັນປ່ຽນທີ່ດີຂຶ້ນ ແລະ ທັງເປັນການບຳລຸງສ້າງພະນັກງານການນຳຂອງພວກເຮົາ ຈາກຂະບວນການວຽກງານຕົວຈິງເພື່ອໃຫ້ມີຄວາມຮູ້-ຄວາມສາມາດ ທີ່ເລິກເຊິ່ງ ແລະ ຮອບດ້ານຫຼາຍຍິ່ງຂຶ້ນ.

#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພົນທະລາ

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນ ເປັນເງິນກີບ